**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

***********

PCD

ເລກທີ 043 /ພກພ

ນະຄອນຫລວງວຽງຈັນ, ວັນທີ 24/04/2024

## ໜັງສືລາຍງານການແກ້ໄຂການດ້ອຍຄ່າຂອງທຶນ

**ຮຽນ:** ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບທີ່ນັບຖື.

ທ່ານ ຜູ້ອຳນວຍການໃຫ່ຍ ຕລຊລ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ບັນດານັກລົງທຶນ ແລະ ຜູ້ຖືຮຸ້ນຂອງບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາມະຫາຊົນທີ່ນັບຖື.

**ເລື່ອງ:** ແຜນການແກ້ໄຂການດ້ອຍຄ່າຂອງທຶນຂອງ ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

- **ອີງຕາມ** ໜັງສືແຈ້ງການຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍກົນໄກການຮັກສາສະຖານະການເປັນບໍລິສັດ ຈົດທະບຽນໃນ ຕລຊລ ຂອງບໍລິລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ.
- **ອີງຕາມ** ການຕົກລົງເຫັນດີຂອງ ສະພາບໍລິຫານຄັ້ງວັນທີ 19 ເມສາ 2024

ຜ່ານການຈັດຕັ້ງປະຕິບັດຕາມແຜນການແກ້ໄຂການດ້ອຍຄ່າຂອງທຶນ ຂອງບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ), ບໍລິສັດ ສາມາດແກ້ໄຂການດ້ອຍຄ່າຂອງທຶນໄດ້ຕາມແຜນ ອີງຕາມບົດລາຍງານການເງິນທີ່ໄດ້ຮັບການກວດສອບຈາກຜູ້ກວດສອບພາຍນອກໃນປີ 2023 ມີກຳໄລສຸດທິຂອງບໍລິສັດມີ 142.238 ລ້ານກີບ ແລະ ຫຼັງຈາກຫັກການຂາດທຶນສະສົມ 127.604 ລ້ານກີບ, ເຮັດໃຫ້ບໍລິສັດມີຍອດເຫຼືອກຳໄລສຸດທິ 14.238 ລ້ານກີບ. ດັ່ງນັ້ນ, ຄະນະບໍລິຫານງານຈຶ່ງຕົກລົງຈັດສັນຍອດກຳໄລສຸດທິ ປະຈຳປີ 2023 ດັ່ງນີ້:

1) ເຂົ້າຄັງສຳຮອງຕາມລະບຽບການຈຳນວນ 1.463 ລ້ານກວ່າກີບ ເທົ່າກັບ 10 ສ່ວນຮ້ອຍ;

2) ຈ່າຍເງິນປັນຜົນຈຳນວນ 12.804 ລ້ານກີບ ຫຼື 22 ກີບຕໍ່ຮຸ້ນ (ຈາກຈຳນວນຮຸ້ນທັງໝົດ 582.000.000) ເທົ່າກັບ 87,4 ສ່ວນຮ້ອຍ;

### 1. ແຜນການຈັດຕັ້ງປະຕິບັດໃນປີ 2023-2030

1.1 ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ເປັນຜູ້ຖືຮຸ້ນບໍ່ຖ່ານຫີນເມືອງວຽງພູຄາ,ແຂວງຫຼວງນ້ຳທາ ກັບ ບໍລິສັດ ແອວນໍເຕີນພັດພະນາ ຈຳກັດຜູ້ດຽວ ແລະ ບໍລິສັດ ພົນນາເຄິລອິນເສັສເມັນຄາປີໂຕ ຈຳກັດຜູ້ດຽວ ລວມທັງໝົດ 25 % ແລະ ເປັນຜູ້ຮັບເໝົາໃນການຂຸດຄົ້ນບໍ່ຖ່ານຫີນເມືອງວຽງພູຄາ, ແຂວງຫຼວງນ້ຳທາ.ຕາມສັນຍາຊື້ຂາຍຖ່ານຫີນ 5.000.000 ໂຕນ ມູນຄ່າ 250.000.000 ໂດລາ ເປັນເວລາ 5 ປີ, ບໍລິສັດ ມີລາຍໄດ້ຈາກການຖືຮຸ້ນສະເລ່ຍ 5 ໂດລາ ຕໍ່ ໂຕນ ຄາດຄະແນລາຍຮັບ

ຈາກການຖືຮຸ້ນ 5,000,000 ໂດລາ ຕໍ່ປີ,ລາຍຮັບ 12ໂດລາ ຕໍ່ ໂຕນ ຄາດຄະເນລາຍຮັບຈາກການການຂຸດຄົ້ນ 12,000,000 ໂດລາ ຕໍ່ປີ, ລວມເປັນ 85ລ້ານໂດລາ ໃນໄລຍະເວລາ 5 ປີ

1.2 ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ລົງທຶນ ໂຄງການທາງເວັ້ນຕົວເມືອງດອນໜູນ ຫາ ບ້ານບໍ່ໂອ ນະຄອນຫຼວງວຽງຈັນ ໃນໄລຍະ 30 ກິໂລແມັດ. ຄາດຄະເນມູນຄ່າການລົງທຶນ 210 ລ້ານໂດລາ ດ້ວຍຜົນຕອບແທນ 10%

1.3 ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ລົງທຶນ ໃນພະລັງງານໄຟຟ້າແສງອາທິດ 1000 ເມັກກາວັດ. ຄາດຄະເນມູນຄ່າການລົງທຶນ 800 ລ້ານໂດລາ ດ້ວຍຜົນຕອບແທນ 12,8%

1.4 ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ແຜນການສຶກສາການລົງທຶນ ໂຄງການພະລັງງານໄຟຟ້ານ້ຳຕົກລວມເປັນ 1150 ເມັກກ້ວດ

1.5 ບໍລິສັດ ພູສີກໍ້ສ້າງ ແລະ ພັດທະນາມະຫາຊົນ ກະກຽມມູນຄ່າໂຄງການ

1.5.1. ໂຄງການກໍ່ສ້າງຂົ້ວຂ້າມແມ່ນ້ຳຂອງ ຫຼວງພະບາງ ດ້ວຍທຶນ NEDA

1.5.2. ໂຄງການກໍ່ສ້າງເສັ້ນທາງ R12 ດ້ວຍທຶນ NEDA

1.5.3. ໂຄງການກໍ່ສ້າງການເຈື່ອນ ແຂວງຫຼວງພະບາງ ດ້ວຍທຶນ ADCF (ປະເທດເກົາຫຼີ)

1.5.4. ໂຄງການກໍ່ສ້າງສະໜາມຂີ້ເຫຍື້ອ ແລະ ທາງຊອຍໃນຕົວເມືອງ ແຂວງຫຼວງພະບາງ ດ້ວຍທຶນທະນາຄານໂລກ World bank

ດ້ວຍເຫດຜົນດັ່ງກ່າວນີ້ ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາມະຫາຊົນ ຄາດຄະເນວ່າຈະສາມາດແກ້ໄຂ ການດ້ອຍຄ່າຂອງທຶນຕາມແຜນ, ສະນັ້ນ ຈຶ່ງຮຽນສະເໜີມາຍັງທ່ານຊ່ວຍພິຈາລະນາ ຕາມທາງຄວນດ້ວຍ

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ.

**ຜູ້ອຳນວຍການ**

ກະຊວງ ໂຍທາທິການ ແລະ ຂົນສົ່ງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company ນະຄອນຫຼວງ ວຽງຈັນ

**ສີທາ ພົມມະຈິດ**